ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 9:
## The Epic Story of Thao Hung - Thao Cheuang (Con.)

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 3:** ມະຫາກາບເລື່ອງ "ທ້າວຮຸ່ງ-ທ້າວເຈືອງ" **(ຕໍ່)** ເວລາ: 90 ນາທີ
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ປະເພນີຖືຜີ ແລະ ລ້ຽງຜີ<br>- ລັກສະນະຂອງການລ້ຽງຜີ.<br>- ປະເພນີການຄົບງັນ ແລະ ການສົ່ງສະການ.</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ປະເພນີຖືຜີ ແລະ ລ້ຽງຜີ<br>- ລັກສະນະຂອງການລ້ຽງຜີ<br>- ປະເພນີການຄົບງັນ ແລະ ການສົ່ງສະການ.</td><td>ຄຳຖາມຫຼັກ (Questions):<br>1) ປະເພນີການການຖືຜີ ແລະການລ້ຽງຜີໃນມະຫາກາບທ້າວຮຸ່ງ-ທ້າວເຈືອງເພິ່ນເຮັດແນວໃດ?<br>2) ລັກສະນະຂອງການລ້ຽງຜີໃນເລື່ອງທ້າວຮຸ່ງ-ທ້າວເຈືອງເພິ່ນເຮັດແນວໃດ?<br>3) ປະເພນີການຄົບງັນ ແລະ ການສົ່ງສະການໃນເລື່ອງທ້າວຮຸ່ງ-ທ້າວເຈືອງເພິ່ນເຮັດແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງເຊັ່ນການຖືຜີ, ການລ້ຽງຜີ, ການຄົບງັນ ແລະການສົ່ງສະການ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
</table>

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

## ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)

- **ສື່ການສອນມີ:**
  ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມມະຫາກາບທ້າວຮຸ່ງ-ທ້າວເຈືອງ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.
- **ກິດຈະກຳການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

**I. ທວນຄືນບົດຮຽນເກົ່າ**

- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງປະເພນີການເຮັດບຸນ, ການໃຫ້ຂອງຕ້ອນ, ເຄື່ອງບັນນາການ, ການນຸ່ງຖື ແລະການແຕ່ງຕົວເອ້ຍ້ອງໂດຍຫຍໍ້.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 3**

**ມະຫາກາບເລື່ອງ "ທ້າວຮຸ່ງ-ທ້າວເຈືອງ" (ຕໍ່)**

### 3.3 ວັດທະນະທຳ ແລະ ຮີດຄອງປະເພນີບາງດ້ານໃນມະຫາກາບທ້າວຮຸ່ງ-ທ້າວເຈືອງ

**3.3.6 ປະເພນີການຖືຜີ ແລະ ລ້ຽງຜີ** (20 ນາທີ)

**<u>ກິດຈະກຳ 1:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ປະເພນີການການຖືຜີ ແລະການລ້ຽງຜີໃນມະຫາກາບທ້າວຮຸ່ງ-ທ້າວເຈືອງເພິ່ນເຮັດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (15 ນາທີ)

ຄຳວ່າ ຜີ ມັນແມ່ນຈິດສຳນຶກ ແລະ ຄວາມເຊື່ອອັນໜຶ່ງທີ່ຍັງຢູ່ໃນແນວຄິດຈິດໃຈມາແຕ່ດຶກນານ ແລະ ມາເຖິງປັດຈຸບັນນີ້ປະຊາຊົນຢູ່ຕາມທ້ອງຖິ່ນກໍຍັງມີການຖືຜີ, ລ້ຽງຜີໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ. ດັ່ງນັ້ນ, ການລ້ຽງຜີ ແລະ ການຖືຜີນັບໄດ້ວ່າເປັນຮີດຄອງປະເພນີມີມາແຕ່ດຶກນານທີ່ສຸດກ່ອນຍຸກສາສະໜາພາມ ແລະ ສາສະໜາພຸດທັງເປັນບັນຫາໜຶ່ງທີ່ໜ້າສຶກສາພໍສົມຄວນ.

ການນັບຖືຜີຢູ່ໃນເລື່ອງທ້າວຮຸ່ງທີ່ນັກປະພັນໄດ້ສະແດງອອກມີຫຼາຍຮູບແບບ ແລະມີຫຼາຍປະເພດແຕກຕ່າງກັນຄືດັ່ງນີ້:

- **ຜີຟ້າ - ຜີແຖນ:** ຜີນີ້ໄດ້ຢູ່ທີ່ເມືອງສະຫວັນຊັ້ນຟ້າເປັນຜູ້ມີບົດບາດອຳນາດສູງ ແລະ ດູແລມະນຸດຢູ່ເບື້ອງລຸ່ມ, ສາມາດພົວພັນກັບມະນຸດໄປມາຫາສູ່ກັນໂດຍຜ່ານລ່າມເມືອງ ຫຼື ນາງໄຍ (ຜູ້ສີ່) ມີລັກສະນະເຂົ້າມາສິງຢູ່ນຳຕົວບຸກຄົນ.

| | |
|---|---|
| ເມື່ອນັ້ນລົມຕ່າວມ້າເຮອຮີບ | ເມືອບົນ |
| ຮຽງຄະດີ (ກອນ) ກ່າວນາງ | ນົງໜ້າ |

| | |
|---|---|
| ກັບທັງສີຜິມເຈົ້າສອນຕານ | ລ້ານມາດ |
| ເປັນລູກເຫງົ້າແຖນຟ້າ | ຜ່ານເມືອງ |
| ຍັງມີຜູ້ກົ່ງທ້າວສະເຫວີຍລາດ | ຊຽງເຄືອ |
| ເນື່ອງຄຳຄອນສັ່ງບາ | ແຖມຖ້ອຍ |
| ຂໍແກ້ເໜືອຫົວພ້ອມທັງສອງ | ລີງມ່ອນ |
| ປະດັບເຄື່ອງຖ້ອນແຖງຊ້ອຍ | ຊອບທຳ |
| ໝໍມ່ອນຮູ້ຕ້ານຕອບ | ເທພີ |
| ທູນເກັງຍາກ່າວກອນ | ກອຍນ້ອມ |
| ນາລີເໜົ້າເຍີງຜິມ | ຜາຍເກດ |
| ເນົານັ່ງລ້ອມທຽບຂ້າງ | ບອກແຍງ |

(ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສິມໄພ ວິໄລສັກ, 2000)

- **ຜີດ້ຳ - ຜີເຮືອນ:** ເປັນຜີແຫ່ງບັນພະບຸລຸດ, ປູ່ຍ່າຕາຍາຍ, ພໍ່ແມ່ລ່ວງລັບໄປຈະມາເປັນຜີດ້ຳ ຫຼື ຜີເຮືອນຢູ່ໃນເຮືອນ, ສ່ວນລູກເຕົ້າຜູ້ມີຊີວິດກໍຈະຮັກສາຫິ້ງຮ້ານໄວ້ຍາມເມື່ອມີຄວາມເດືອດຮ້ອນເກີດຂຶ້ນເຊັ່ນ: ມີເສິກສົງຄາມ ແລະ ເຫດການອື່ນໆເກີດຂຶ້ນຈະມີການເອີ້ນຫາດວງວິນຍານບັນພະບຸລຸດໃຫ້ຊ່ວຍຄ້ຳຄູນ, ດູແລຮັກສາໃຫ້ຕະຫຼອດປອດໄພ. ຜີດ້ຳຈະແຕກຕ່າງຈາກຜີຟ້າ - ຜີແຖນຢູ່ບ່ອນວ່າມີແຕ່ສິ່ງຢູ່ໃນເຮືອນ, ບໍ່ສາມາດຕິດຕໍ່ທາງລ່າມ ຫຼື ຊີ່ເມືອງ ດັ່ງຄຳກອນທີ່ວ່າ:

| | |
|---|---|
| ເຈົ້າຈິ່ງ ໃຫ້ຈ່າຊ້ອນເຣວຣິວ | ຄົວຄວາຍ |
| ພະລີກຳຜີໝູ່ກຳ | ເປັນດ້ຳ... |
| ເຈືອງຈິ່ງ ທວຍສາລີບອກບົນ | ບານດ້ຳ |
| ຊຸນຈອມມ້ຽນເມືອພົມ | ລິດຊົ່ວ ມາກິນ |
| ຄູນກ່ຳພ້າສອງກ້ຳ | ກ່ຳກອນ... |
| ຝູງເຜົ່າເຊື້ອຊັ້ນປູ່ | ຊຸມພາງ ມາກິນ |
| ແນມນາມດຽວກົ່ງຈອມ | ຈຽມເຖົ້າ... |

(ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສິມໄພ ວິໄລສັກ, 2000)

ຄຳກອນນີ້ສະແດງໃຫ້ເຮົາເຫັນວ່າຜີດ້ຳ - ຜີເຮືອນກໍມີບົດບາດສຳຄັນ. ໃນເວລາທ້າວຮຸ່ງໄປຊົມປ່າ, ເຂົ້າຖ້ຳໄປພົບສາວຊູ້ກໍກ່າວເຖິງຜີດ້ຳພໍ່ (ຊຸນຈອມທຳ), ຜີເຊື້ອພົງສະກຸນຈຶ່ງຖືວ່າປະຕິບັດຕາມຮີດຄອງປະເພນີແທ້.

- **ຜີເສື້ອ, ຜີພູຜາປ່າໄມ້, ຜີໄຮ່ຜີນາ ແລະ ຜີອາຮັກຫຼັກເມືອງ:** ເປັນຜີທີ່ຮັກສາຂົງເຂດປະເທດບ້ານ, ເມື່ອມີການທຳພິທີກຳໃດໜຶ່ງ ນອກຈາກຈະກ່າວເຖິງຜີຟ້າຜີແຖນ, ຜີດ້ຳຜີເຮືອນແລ້ວຍັງທຳພິທີໄປຍັງຜີເສື້ອ, ຜີພູຜາປ່າໄມ້ໄຮ່ນາໃຫ້ແກ່ໝາກໄດ້ກິນຄືກັນ, ຜີຝູງນີ້ບໍ່ສາມາດຕິດຕໍ່ພົວພັນສື່ສານກັບມະນຸດໄດ້, ແຕ່ສາມາດຊ່ວຍມະນຸດດັ່ງຄຳກອນທີ່ວ່າ:

| | |
|---|---|
| ...ວອນຄວາມເຖິງປູ່ຕາ | ຜີດ້ຳ |

| | |
|---|---|
| (ທັງມວນເສືອຄອຍດົງ | ຫ້ອຍຮ່ອງ |
| ທຸກກີບກໍ້າແດນຟ້າ | ຟາກສະຫວັນ)... |
| ຕູກໍ ປູກເຂົ້າກ້າປຸນແຕ່ງ | ນາວານ |
| ຂໍໃຫ້ເປັນກໍງານດັ່ງເລົາ | ຄາແທ້ |
| ທັງແດນດ້າວຊໍາມອຍ | ຖໍ້າໃຫຍ່ ມາກິນ |
| ຢ່າໄດ້ພາໝູ່ເນື້ອມາໃກ້ | ໄຮ່ນາ ແດ່ເນີ |
| (ຊອນກັນແລລໍ່າດູ | ນາເຈົ້າ) |
| ຍາເກືອກກົ້ອກວນເຂົ້າ | ຄວ່າກິນ ແດ່ເນີ... |
| ຢ່າໄດ້ມີແມງກັດປິດຮວງ | ລົງພື້ນ |
| (ຕັກແຕນບົ້ງແຄງຕອມ | ຕົກຫຼົ່ນ ຢ່າມີ)... |
| ອັນໜຶ່ງໃຫ້ຢາດນໍ້າລົງສູ່ | ນາດີ ແດ່ເນີ |
| ເປັນກໍງານດັ່ງປູນ | ແປງໄວ້... |

(ດວງເດືອນ ບຸນຍາວົງ; ໂອທອງ ຄໍາອິນຊູ ແລະ ສົມໄພ ວິໄລສັກ, 2000)

### 3.3.7 ລັກສະນະຂອງການລ້ຽງຜີ (20 ນາທີ)

**<u>ກິດຈະກໍາ 2:</u>**

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕໍາລາ
  1) ລັກສະນະຂອງການລ້ຽງຜີໃນເລື່ອງທ້າວຮຸ່ງ-ທ້າວເຈືອງເພິ່ນເຮັດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກໍາ: (15 ນາທີ)

**1) ການລ້ຽງຜີແບບງ່າຍດາຍ.**

ການລ້ຽງຜີແບບນີ້ເປັນວິທີໜຶ່ງທີ່ຄົນບູຮານໄດ້ປະຕິບັດເປັນປະຈໍາໂດຍມີການຟາຍເຫຼົ້າໄຫ ແລະ ກ່າວວ່າເມື່ອມີເຫດການອັນໃດອັນໜຶ່ງເກີດຂຶ້ນກໍຂໍຮ້ອງໃຫ້ຜີຝູງນັ້ນມາຄຸ້ມຄອງກຸ້ມກວມໃຫ້ຕະຫຼອດປອດໄພຢ່າມີໄພຮ້າຍອັນໃດເກີດຂຶ້ນ, ໃນລັກສະນະນີ້ຄົນບູຮານປະຕິບັດທຸກຄັ້ງທີ່ມີການຊຸມແຊບກັບເພື່ອນຝູງ, ແຂກຄົນໄປມາຫາສູ່ກັນ, ການໄປສູ່ຂໍຜູ້ສາວ ແລະ ການໄປທ່ຽວຊົມປ່າ.

ສ່ວນວ່າການລ້ຽງຜີປ່າ - ຜີດົງ, ຜີໄຮ່-ຜີນາ, ໃນເວລາມີການໂຫ່ເນື້ອ, ເຮັດໄຮ່ເຮັດນາ, ຫາປາການປະຕິບັດແບບນີ້ນັບວ່າເປັນພິທີທີ່ດີງາມອັນໜຶ່ງ ເຊິ່ງມັນສະແດງອອກເຖິງຄວາມເຊື່ອໝັ້ນວ່າເມື່ອເຮົາປະຕິບັດໄປແລ້ວມັນຈະເກີດມີຜົນດີຕາມມາຢ່າງຄຸ້ມຄ່າ, ຜົນໄມ້ໄຮ່ນາຈະເປັນໝາກເປັນຮວງດີຍິ່ງ. ຢູ່ໃນເລື່ອງນີ້ຕອນ (ທ້າວຮຸ່ງເຮັດໄຮ່ນາ ແລະ ໂຫ່ເນື້ອ) ໃນມື້ທ້າວລົງເຮັດນາວານ, ທ້າວຮຸ່ງໃຫ້ອາວພອງ ແລະ ອ້າຍຄວ່າງພິທີກໍາລ້ຽງຜີເສຍກ່ອນ, ໃນນັ້ນກໍມີຜີດໍ້າ, ຜີປ່າ ຫຼື ຜີເສືອດົງ, ຜີນາກ (ທ້າວຮຸ່ງ - ທ້າວເຈືອງ ໜ້າ 9, 12, 13, 44, 103, 131).

**2) ການລ້ຽງຜີທີ່ຕ້ອງໄດ້ປະຕິບັດຕາມຄໍາສັນຍາ.**

ແມ່ນການລ້ຽງຜີທີ່ບໍ່ມີພຽງແຕ່ກາຍພາຍເຫຼົ້າ ແລະ ກ່າວໄປມາຫາຜີແຕ່ລະແຫ່ງຫົນໃຫ້ມາຊ່ວຍມາຄູນເທົ່ານັ້ນ, ແຕ່ຍັງໄດ້ບະບົມໄປພ້ອມໆກັນຄືການໃຫ້ຄຳສັນຍາໃນເມື່ອໄດ້ຕາມຄວາມມຸ່ງມາດປາຖະໜາ ຫຼື ເມື່ອສຳເລັດກິດຈະການແລ້ວຈະມີການສ້າງແຕ່ງແປງປາງບຸນໃຫຍ່ (ປາງຊ້າງ), ຫໍໂຮງ ຫຼື ເອົາສິ່ງໃດໜຶ່ງຕອບແທນ (ຊິ້ນໄປປາມາເຊິ່ງເປັນການຕອບແທນບຸນຄຸນກັນ ຫຼື ເວົ້າແບບງ່າຍໆວ່າຊື້ຈ້າງ).

ການລ້ຽງຜີແບບນີ້ບໍ່ຄອຍປະຕິບັດກັນເປັນກິດຈະກຳປະຈຳວັນປານໃດ, ເວັ້ນແຕ່ວ່າມີເຫດບ້ານການເມືອງເກີດສົງຄາມການປຸ້ນຢ່າງດຸເດືອດລະຫວ່າງເມືອງຕໍ່ເມືອງຈຶ່ງບະຜີເປັນຈຸດມຸ້ງຫວັງອັນສຸດທ້າຍເທົ່ານັ້ນເຊັ່ນວ່າ: ທ້າວກວ່າ ແລະ ແອງກາເຈົ້າປົກຄອງເມືອງປະກັນ ແລະ ຄຳວັງຍົກທັບໄປຕີເມືອງເງິນຍາງຍ້ອນຢາກໄດ້ນາງອື້ອຄ່າໃຫ້ແອງກາຜູ້ເປັນຫຼານ, ທ້າວກວ່າໄດ້ບະບົນຕໍ່ຜີຕ່າງໆວ່າ: ຖ້າໄດ້ຮັບໄຊຊະນະແລ້ວຈະຮັບປາກສ້າງແປງປາງຊ້າງ (ສ້າງຫໍປະສາດຫໍໂຮງໃຫຍ່) ໃຫ້ເປັນການຕອບແທນດັ່ງຄຳກອນທີ່ວ່າ:

| | |
|---|---|
| ນໍລິນຜູ້ຜົນຄອນ | ທ້າວກວ່າ |
| ນິ້ວແນບເຂົ້າບິນໄຫ້ | ຫິ່ງເມືອງ |
| ດ້ຳເຜົ່າຊັ້ນເຊື້ອຊາດ | ແນວນາມ ມາກົມ |
| ຕູຈັກ ເນືອງແພນເຖິງຊື່ນຊົມ | ຊົນຊ້າງ |
| ຄັນວ່າ ຍໍຕາວຕ້ອງສົມຄາມ | ໃຫ້ປອດ... |
| ເສື້ອປາກດ້າວຜາຫຼອດ | ແດນຜາງ ມາກົມ |
| ສູຄ່ອຍ ເດີນດອມພົນເພື່ອນຕູ | ເຕີມຄຸ້ມ |
| ຄູນຫຼານໄດ້ນາງງາມ | ນົງຖ່າວ |
| ດ້ຳປູ່ເຊື້ອນເຊີນຄຸ້ມ | ໄພ່ພົນ... |
| ໃຫ້ຜາບໄດ້ອື້ອຄ່າ | ອາມຄາຍ |
| ລະຫວັງລຳແນນຮ່ວມສວນ | ສະເລີມກວ້າງ |
| ທານພາຍແພ້ພົນກື | ກອຍງ່າຍ |
| ດັ່ງນັ້ນ ຈະແຕ່ງຕັ້ງປາງຊ້າງ | ຜອກພະລີ. |

(ດວງເດືອນ ບຸນຍາວົງ; ໂອທອງ ຄຳອິນຊູ ແລະ ສົມໄພ ວິໄລສັກ, 2000)

ສ່ວນທ້າວຮຸ່ງກໍໄດ້ນຳພາໄພ່ພົນໂຍທາທະຫານຫຼາຍແມ່ທັບອອກຮົບກັບກຳລັງຂອງພະຍາວ່າ ແລະ ແອງກາເພື່ອຮັກສາຕົວເມືອງເງິນຍາງ ແລະ ນາງອື້ອຄ່າບໍ່ໃຫ້ຕົກເປັນຂອງພວກຂ້າເສິກຈຶ່ງມີການບະບົນໂດຍນາງຈອມແມ່ຂອງທ້າວຮຸ່ງບະໃຫ້ລູກຂອງຕົນເໜືອກັບພະຍາກວ່າໂດຍມີການສັນຍາຈະຮັບສ້າງປາງຊ້າງໃຫ້ຖ້າລູກມີໄຊຊະສົງຄາມກັບມາແລ້ວຄືດັ່ງນີ້:

| | |
|---|---|
| ...ເມື່ອນັ້ນ ບາຄານຍ້າຍຍວງຄີງ | ຍົກຍ່າງ |
| ເຖິງແຫ່ງຫ້ອງເຮືອນດ້ຳ | ກ່າວພະສີ |
| ລູກຈັກໄປຕ່າງທ້າວທານປົ່ວ | ປາງຫຼວງ ພໍ່ເອີຍ |
| ສົງຍົກກອນເກີບຊູ | ຊຽງລ້ານ |

| | |
|---|---|
| ບັດນີ້ ໃນວຽງພັຽງຟອງໄຟ | ຣິມຊະລວກ |
| ລຸງໜ່ຽວໃຫ້ໄປປ້ານ | ຊ່ອຍແຂງ |
| ຖຸນລູກແພ້ພົນເພື່ອນ | ແກວແມນ |
| ຄືນມາຜັດກ່າວແປງ | ປາງຊ້າງ. |

(ດວງເດືອນ ບຸນຍາວົງ; ໂອທອງ ຄໍາອິນຊູ ແລະ ສົມໄພ ວິໄລສັກ, 2000)

**3.3.8 ປະເພນີການຄົບງັນ ແລະ ການສົ່ງສະການ** (20 ນາທີ)

**<u>ກິດຈະກໍາ 3:</u>**

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕໍາລາ
  1) ປະເພນີການຄົບງັນ ແລະ ການສົ່ງສະການໃນເລື່ອງທ້າວຮຸ່ງ-ທ້າວເຈືອງເພິ່ນເຮັດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກໍາ: (15 ນາທີ)

**ກ.** ເມື່ອຂຸນຈອມທໍາພໍ່ຂອງທ້າວເຈືອງຕາຍຢູ່ໃນເມືອງຂອງຕົນໃນຂະນະທີ່ເປັນເຈົ້າຊີວິດ, ປະເພນີການສົ່ງສະການທີ່ກ່າວໄວ້ຈັດແບ່ງເປັນຂັ້ນຕອນຕ່າງໆດັ່ງນີ້:

1). ການຄົບງັນໃນເວລາມີຂອນຜີຢູ່ດ້ວຍການຟ້ອນ, ເສບ, ຂ້າຄວາຍລ້ຽງຄົນ ແລະ ຜີ.

2). ເຮັດໂລງຟອກຄໍາຕິດຢາງໂລງ, ສ້າງເມມສູງຟອກຄໍາປະດັບດ້ວຍແກ້ວ, ເອົາໂລງວາງເທິງເຊິງສະກອນ (ກອງຟອນ ຫຼື ກອງຟືນ).

3). ການຕັດແປງຖະໜົນຈາກເມືອງໄປຍັງປ່າບ່ອນເຜົາສົບເພື່ອແຫ່ຂະບວນຟ້ອນເສບ, ຫຼິ້ນເກມ (ໄຕ່ເຊືອກ) ກອງທະຫານຖືອາວຸດຫອກ, ງ້າວຢ່າງເປັນແຖວ.

4). ໃຊ້ຟືນ ແລະ ທຽນເຜົາໂລງທີ່ມີຜ້າແພພັນອ້ອມຮອບ.

5). ເກັບດູກໃນມື້ຕໍ່ມາ, ເອົາດູກສ່ວນໜຶ່ງໄປຝັງແລ້ວເອົາສ່ວນໜຶ່ງມາກໍ່ທາດຟອກຄໍາ, ລູກຫຼານໄປໄຕ້ທູບທຽນບູຊາທຸກງມື້ເຊັ່ນ:

| | |
|---|---|
| ແຕ່ນັ້ນ ເຂົາກໍສວ່າງຍ້າຍຍໍຫີບ | ໂຮງຄໍາ |
| ແຜແຜສຽງຄວ່າງພາຍ | ໂຈມເຈົ້າ |
| ທັງຫຼາຍພ້ອມມາມອນ | ໂຮມຮອດ |
| ຍໍແຈ່ມເຈົ້າແພງລ້ານ | ໃສ່ໂລງ |

(ດວງເດືອນ ບຸນຍາວົງ; ໂອທອງ ຄໍາອິນຊູ ແລະ ສົມໄພ ວິໄລສັກ, 2000)

**ຂ.** ເມື່ອທ້າວຮຸ່ງຕາຍໃນສະໜາມທີ່ເມືອງປະກັນ ພະຍາຟ້າຮ່ວານກໍໄດ້ຈັດການມັງຮຽນຄາບສົ່ງສະການໃຫ້ຕາມປະເພນີເພື່ອບໍ່ໃຫ້ເປັນກໍາເປັນເວນຕໍ່ກັນ ເພາະພະຍາຟ້າຮ່ວານບໍ່ຢາກເຮັດເສິກຮົບເລວກັບທ້າວຮຸ່ງເລີຍ. ເມື່ອພະຍາຟ້າຮ່ວານໃຫ້ທະຫານໄປສົ່ງຂ່າວແກ່ແມ່ທ້າວເຈືອງ, ພວກແມ່ທັບນາຍກອງຂອງທ້າວຮຸ່ງໄດ້ກ່າວອາຄາດຮຸນ

ແຮງ (ຍັງຂອດໄວ້ເວນຮ້າຍບໍ່ສະຫາຍ) ພະຍາຟ້າຮອ່ານຈຶ່ງນິມິນພະມາເທດຖວາຍທ້າວ, ມີການແຫ່ຫົວບວດຢູ່ເຝົ້າກອງຟອນ, ເກັບດູກເຊັ່ນ:

ຝູງຄົນເຈົ້າບາເຈືອງ ລືໂລກ

ເຂົາຜ່ອງ ແຖເກດເກົ້າ ບາທ້າວບວດຫາ

ຜັດວ່າ ເປັນເຖນໄດ້ສາມພັນ ເປັນອາດ

ໄວ້ຢູ່ເຝົ້າບາທ້າວ ໄປ່ໜີ.

(ດວງເດືອນ ບຸນຍາວົງ, ໂອທອງ ຄໍາອິນຊູ, ສົມໄພ ວິໄລສັກ ແລະ ຄໍາສອນ ທອງມີໄຊ,2003)

ເຫັນວ່າໃນປະເພນີສິງສະການບວດນໍາຜູ້ຕາຍ ແລະ ໃຫ້ພຣະມາເທດຖວາຍຜູ້ຕາຍເຊິ່ງໃນປັດຈຸບັນຍັງປະຕິບັດຢູ່, ມີການຈູດເຜົາສົບໃສ່ກອງຟອນ, ມີການຄົບງັນໃຫ້ຄວາມອົບອຸ່ນແກ່ຄອບຄົວຜູ້ຕາຍ (ສົມທະເພີຍ ສີວົງສັກ ແລະອໍາໄພ ສອນທະລາ, 2019).

**III. ຂັ້ນສະຫຼຸບ**

❖ **ຄູເນັ້ນຈຸດສໍາຄັນຂອງບົດຮຽນ**

- ປະເພນີຖືຜີ ແລະ ລ້ຽງຜີ
- ລັກສະນະຂອງການລ້ຽງຜີ.
- ປະເພນີການຄົບງັນ ແລະ ການສິ່ງສະການ.

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄໍາຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄໍາຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນໍານັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ສົມທະເພີຍ ສີວົງສັກ ແລະ ອໍາໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.

ດວງເດືອນ ບຸນຍາວົງ; ໂອທອງ ຄໍາອິນຊູ ແລະ ສົມໄພ ວິໄລສັກ (2000) **ມະຫາກາບທ້າວຮຸ່ງ-ທ້າວເຈືອງເຫຼັ້ມ**1 ຫໍສະໝຸດແຫ່ງຊາດ.

ດວງເດືອນ ບຸນຍາວົງ, ໂອທອງ ຄໍາອິນຊູ, ສົມໄພ ວິໄລສັກ ແລະ ຄໍາສອນ ທອງມີໄຊ (2003) **ມະຫາກາບທ້າວຮຸ່ງ-ທ້າວເຈືອງເຫຼັ້ມ 2** ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ.

ຄູສອນປະຈໍາວິຊາ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ປທ.ສົມທະເພີຍ ສີວົງສັກ